ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ .98. /ນຍ.

ນະຄອນຫຼວງວຽງຈັນ, ວັນທີ .23.8..2012.

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ຜົນການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ ປະຈຳປີ 2012

- ອີງຕາມ ມາດຕາ 12, ຂໍ້ 8 ຂອງກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003;
- ອີງຕາມ ມາດຕາ 11, ມາດຕາ 12 ແລະ ມາດຕາ 13 ວັກ 1 ຂອງດຳລັດວ່າດ້ວຍມາດຕະຖານຄວາມທຸກຍາກ ແລະ ການພັດທະນາ ສະບັບເລກທີ 201/ລບ, ລົງວັນທີ 25 ເມສາ 2012;
- ອີງຕາມ ເອກະສານລາຍງານຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ສະບັບເລກທີ 488/ຄພທສ, ລົງວັນທີ 09 ກໍລະກົດ 2012.

### ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1.** ຮັບຮອງ ແລະ ປະກາດໃຊ້ ຜົນການກວດກາ ປະເມີນຄວາມທຸກຍາກ ແລະ ການພັດທະນາທົ່ວປະເທດ ປະຈຳປີ 2012 ດັ່ງນີ້:

- ໃນຈຳນວນທັງໝົດ 1.076.981 ຄອບຄົວ ໃນທົ່ວປະເທດ,
  - ມີ ຄອບຄົວພັດທະນາ ຈຳນວນ 617.231 ຄອບຄົວ ( ເທົ່າກັບ 57,31% ).
  - ມີ ຄອບຄົວທຸກຍາກ ຈຳນວນ 140.129 ຄອບຄົວ ( ເທົ່າກັບ 13,01% ).
- ໃນຈຳນວນ ທັງໝົດ 8.615 ບ້ານ ໃນທົ່ວປະເທດ,
  - ມີ ບ້ານພັດທະນາ ຈຳນວນ 1.634 ບ້ານ ( ເທົ່າກັບ 18.97%) .
  - ມີ ບ້ານທຸກຍາກ ຈຳນວນ 2.608 ບ້ານ ( ເທົ່າກັບ 30.27% ).
  - ມີ 2 ຈຸດສຸມ ທີ່ໄດ້ຮັບຮອງບ້ານໃຫຍ່ ໃຫ້ກາຍເປັນຕົວເມືອງນ້ອຍ ໃນຊົນນະບົດ.

- ໃນຈຳນວນ ທັງໝົດ 145 ເມືອງ ໃນທົ່ວປະເທດ,
  - ມີ ເມືອງທຸກຍາກ ຈຳນວນ 46 ເມືອງ.
  - ຍັງບໍ່ທັນມີເມືອງໃດ ສາມາດປະກາດເປັນເມືອງພັດທະນາໄດ້.

**ມາດຕາ 2.** ໃຫ້ນຳໃຊ້ຜົນຂອງການກວດກາປະເມີນຜົນນີ້ ເຂົ້າໃນການກຳນົດຄາດໝາຍ, ເປົ້າໝາຍແກ້ໄຂຄວາມທຸກຍາກ ຂັ້ນຄອບຄົວ, ຂັ້ນບ້ານ ແລະ ກຳນົດເປົ້າໝາຍ ສ້າງບ້ານພັດທະນາ ແລະ ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍ ໃນຊົນນະບົດ ຕາມ 4 ເນື້ອໃນ 4 ຄາດໝາຍ.

**ມາດຕາ 3.** ມອບໃຫ້ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ເປັນໃຈກາງປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອເຜີຍແຜ່ຜົນການກວດກາ, ປະເມີນດັ່ງກ່າວ ແລະ ຜັນຂະຫຍາຍ ສ້າງເປັນແຜນການ, ໂຄງການລະອຽດ, ຈັດສັນງົບປະມານ ແລະ ລະດົມທຶນຈາກບັນດາຂະແໜງການ, ທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ ພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຮອບດ້ານ ແລະ ລຶບລ້າງຄວາມທຸກຍາກທົ່ວປະເທດ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4.** ບັນດາ ທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5.** ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ